ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ແຂວງບໍ່ແກ້ວ

ເຈົ້າແຂວງ

ເລກທີ 1238 /ຈຂ.ບກ

ບໍ່ແກ້ວ, ວັນທີ 16 ກໍລະກົດ 2015.

# ຄໍາສັ່ງເພີ່ມເຕີມ

## ວ່າດ້ວຍ ການແກ້ໄຂບັນຫາການປູກກ້ວຍຫອມ ໃສ່ເນື້ອທີ່ນາ ແລະ ເຂດຊົນລະປະທານ ຢູ່ແຂວງບໍ່ແກ້ວ.

- ອີງຕາມ: ການຕົກລົງເຫັນດີເປັນເອກະພາບ ກອງປະຊຸມຄະນະປະຈໍາພັກແຂວງ ຄັ້ງວັນທີ 10/07/2015 ວ່າດ້ວຍການແກ້ໄຂບັນຫາ ການປູກກ້ວຍຫອມໃສ່ເຂດເນື້ອທີ່ນາ ແລະ ເຂດຊົນລະປະທານ.
- ອີງໃສ່: ຜົນການລົງກວດກາຕົວຈິງຂອງບັນດາທ່ານອະນຸກໍາມະການແກ້ໄຂບັນຫາການປູກກ້ວຍຫອມ ທີ່ບໍ່ຖືກຕ້ອງຕາມລະບຽບການຢູ່ແຂວງບໍ່ແກ້ວ ພາຍໃນ 5 ເມືອງ.
- ອີງຕາມ: ແຈ້ງການຂອງລັດຖະບານສະບັບເລກທີ 830/ຫລບ.ກສສ, ລົງວັນທີ 24 ມິຖຸນາ 2014 ວ່າດ້ວຍການແກ້ໄຂການປູກກ້ວຍຫອມໃສ່ດິນນາຢູ່ບັນດາແຂວງ ພາກເໜືອ.

ໃນໄລຍະຜ່ານມາໄດ້ມີບໍລິສັດ, ບຸກຄົນ, ນິຕິບຸກຄົນໄດ້ລົງທຶນເຂົ້າໃນການປູກກ້ວຍຫອມຈໍານວນຫຼວງຫຼາຍ ທີ່ບໍ່ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ວ່າດ້ວຍ ການລົງທຶນພາຍໃນ ແລະ ຕ່າງປະເທດ, ເຊິ່ງໄດ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ທໍາມະຊາດ ແລະ ສັງຄົມນັບມື້ນັບເພີ່ມຂຶ້ນ ພ້ອມກັນນີ້ຍັງກໍ່ໃຫ້ເກີດມີຂໍ້ຂັດແຍ່ງພາຍໃນທ້ອງຖິ່ນຕ່າງໆ, ເປັນຕົ້ນໄດ້ສ້າງຜົນກະທົບຕໍ່ກັບປະຊາຊົນທີ່ມີເນື້ອທີ່ນາ ແລະ ນໍາໃຊ້ແຫຼ່ງນໍ້າຊົນລະປະທານຫຼາຍແຫ່ງ ເພື່ອປູກເຂົ້າ ແລະ ພືດອື່ນໆ.

ເພື່ອແກ້ໄຂບັນຫາການປູກກ້ວຍຫອມຢູ່ພາຍໃນ ແຂວງບໍ່ແກ້ວ ໃຫ້ເຂົ້າສູ່ການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ພ້ອມທັງແກ້ໄຂສິ່ງຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃຫ້ມີຄວາມສະຫງົບ ແລະ ໃຫ້ປະຊາຊົນໄດ້ເຮັດນາທັນກັບລະດູການຜະລິດ.

### ເຈົ້າແຂວງໆ ບໍ່ແກ້ວ ອອກຄໍາສັ່ງດັ່ງນີ້:

❶ ໃຫ້ບັນດາ ພະແນກການທີ່ກ່ຽວຂ້ອງ ແລະ ບັນດາເມືອງ ເອົາໃຈໃສ່ປະຕິບັດຄໍາສັ່ງ ສະບັບເລກທີ 679/ຈຂ.ບກ, ລົງວັນທີ 26 ມິຖຸນາ 2014 ຂອງ ທ່ານເຈົ້າແຂວງໆ ບໍ່ແກ້ວ ຢ່າງເຂັ້ມງວດ ແລະ ເດັດຂາດ.

❷ ບໍລິສັດ, ບຸກຄົນ, ນິຕິບຸກຄົນທີ່ປູກກ້ວຍຫອມໃສ່ເນື້ອທີ່ດິນນາ (ນັບທັງເນື້ອທີ່ດິນ ທີ່ໄດ້ປູກກ້ວຍຫອມຜ່ານມາ ແລະ ເນື້ອທີ່ດິນ ທີ່ໄດ້ບຸກເບີກແຕ່ຍັງບໍ່ທັນໄດ້ປູກກ້ວຍ) ແມ່ນໃຫ້ຢຸດຕິຢ່າງເດັດຂາດ.

❸ ບໍລິສັດ, ບຸກຄົນ, ນິຕິບຸກຄົນທີ່ໄດ້ປູກກ້ວຍ ຢູ່ເຂດແຫຼ່ງນໍ້າຊົນລະປະທານ, ອ່າງໂຕ່ງນໍ້າຊົນລະປະທານ ແລະ ນໍາໃຊ້ແຫຼ່ງນໍ້າຊົນລະປະທານ ເຂົ້າໃນການປູກກ້ວຍຫອມ (ນັບທັງຈໍານວນທີ່ໄດ້ປູກກ້ວຍ ແລະ ຍັງບໍ່ທັນໄດ້ປູກກ້ວຍໃສ່) ແມ່ນໃຫ້ຢຸດຕິຢ່າງເດັດຂາດ.

- ບໍລິສັດ, ບຸກຄົນ, ນິຕິບຸກຄົນທີ່ໄດ້ສ້າງສິ່ງກີດຂວາງໃສ່ແຫຼ່ງນໍ້າຊົນລະປະທານ ແລະ ອ່າງໂຕ່ງ ນໍ້າຊົນລະປະທານ ແມ່ນໃຫ້ບໍລິສັດຮື້ຖອນສິ່ງກີດຂວາງແລວທາງນໍ້າ ພ້ອມທັງປັບປຸງໃຫ້ຢູ່ໃນສະພາບປົກກະຕິ.
- ບໍລິສັດໃດ ທີ່ໄດ້ຂຸດຄອງເຮັດໃຫ້ຊົນລະປະທານເປ່ເພ ເສຍຫາຍ ນັບທັງເຂື່ອນຊົນລະປະທານ, ຄອງເໝືອງ ແລະ ຂຸດຄອງກັກເກັບນໍ້າທີ່ຕໍ່າກວ່າ ຄອງເໝືອງ ແລະ ຫ້ວຍຮ່ອງທໍາມະຊາດ ຕ້ອງໄດ້ຮັບຜິດຊອບສ້ອມແປງຄືນໃຫ້ຢູ່ໃນສະພາບປົກກະ ຕິ ແລະ ນໍາໃຊ້ໄດ້.

❹ ໃຫ້ຕັດໄຟຟ້າ ແລະ ຮື້ຕາຂ່າຍໄຟຟ້າ, ທໍ່ນ້ຳທີ່ຢູ່ໃນເນື້ອທີ່ປູກກ້ວຍ ທີ່ໄດ້ລະບຸໄວ້ໃນຂໍ້ 1(ໜຶ່ງ) ແລະ ຂໍ້ 2 (ສອງ) ຂອງຄຳສັ່ງສະບັບນີ້.

❺ ຫ້າມບໍ່ໃຫ້ບໍລິສັດ, ບຸກຄົນ, ນິຕິບຸກຄົນ, ພະນັກງານລັດຖະກອນ, ຄະນະໜ່ວຍພັກ, ນາຍບ້ານ ແລະ ອົງການຈັດຕັ້ງຂັ້ນຕ່າງໆ ອະນຸຍາດເນື້ອທີ່ດິນທຸກປະເພດເຂົ້າໃນການປູກກ້ວຍຫອມ, ຖ້າຝ່າຝືນຈະຖືກດຳເນີນຄະດີທາງອາຍາ ແລະ ທາງແພ່ງ ຕາມແຕ່ລະກໍລະນີທີ່ກະທຳຜິດ ຂອງກົດໝາຍ ວ່າດ້ວຍການລົງທຶນ, ກົດໝາຍວ່າດ້ວຍກະສິກຳ-ປ່າໄມ້, ກົດໝາຍ ວ່າດ້ວຍທີ່ດິນ ແລະ ກົດໝາຍວ່າດ້ວຍສິ່ງແວດລ້ອມ.

**❻ ມາດຕະການໃນການຈັດຕັ້ງປະຕິບັດ.**

1). ມອບໃຫ້ຄະນະກຳມະການທີ່ຖືກແຕ່ງຕັ້ງ ຕາມຂໍ້ຕົກລົງຂອງ ທ່ານເຈົ້າແຂວງ ສະບັບເລກທີ 938/ຈຂ. ບກ, ລົງວັນທີ 25 ພຶດສະພາ 2015 ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບກວດກາເນື້ອທີ່ປູກກ້ວຍຫອມ ຂອງ ບັນດາບໍລິສັດທີ່ລະເມີດລະບຽບກົດໝາຍ ຢູ່ແຂວງບໍ່ແກ້ວ ສົມທົບກັບພະແນກການທີ່ກ່ຽວຂ້ອງ, ທ່ານ ເຈົ້າເມືອງ 5 ເມືອງຂອງ ແຂວງບໍ່ແກ້ວ, ສອງກອງບັນຊາການ ປກຊ, ປກສ, ລັດວິສາຫະກິດໄຟຟ້າລາວສາຂາແຂວງບໍ່ແກ້ວ, ອົງການປົກຄອງບ້ານ ແລະ ບໍລິສັດ, ບຸກຄົນ, ນິຕິບຸກຄົນຕະຫຼອດຮອດຂະແໜງການ ທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

2). ໃຫ້ຄະນະກຳມະການດັ່ງກ່າວ ສ້າງແຜນວຽກ ແລະ ແຜນຄົນ, ແຜນເງິນ ພ້ອມທັງກຳນົດເວລາ ການຈັດຕັ້ງປະຕິ ບັດໃຫ້ຖືກຕ້ອງສອດຄ່ອງຕາມລະບຽບການຕ່າງໆ ແລະ ລາຍງານຜົນການຈັດຕັ້ງໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ.

- ມອບໃຫ້ບັນດາທ່ານເຈົ້າເມືອງທັງ 5 ເມືອງ ເອີ້ນບັນດານາຍບ້ານແຕ່ລະບ້ານ ທີ່ເປັນບ້ານເປົ້າໝາຍຢູ່ພາຍໃນເມືອງ ຂອງຕົນແລ້ວ ເຜີຍແຜ່ຄຳ ສັ່ງສະບັບນີ້ໃຫ້ນາຍບ້ານໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

3). ບໍລິສັດ, ບຸກຄົນ, ນິຕິບຸກຄົນທີ່ປູກກ້ວຍຫອມ, ຄະນະໜ່ວຍພັກ, ນາຍບ້ານ ແລະອົງການຈັດຕັ້ງທຸກຂັ້ນ ຕະຫຼອດຮອດທຸກໆ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມຄຳສັ່ງສະບັບນີ້ ແລະ ຄຳສັ່ງຂອງທ່ານເຈົ້າແຂວງ ສະບັບເລກທີ 697/ຈຂ.ບກ, ລົງວັນທີ 26 ມິຖຸນາ 2014, ຖ້າຝ່າຝືນຈະຖືກດຳເນີນຄະດີທາງອາຍາ ແລະ ທາງແພ່ງ ຕາມລະບຽບກົດໝາຍ ຂອງ ສປປ ລາວ.

- ໃຫ້ສະຫຼູບລາຍງານ ຜົນການຈັດຕັ້ງປະຕິບັດຄຳສັ່ງເພີ່ມເຕີມສະບັບນີ້ ໃຫ້ຄະນະປະຈຳພັກແຂວງຊາບ ແລະ ຊີ້ນຳ ໃນແຕ່ລະໄລຍະ.

**❼ ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ສິບຫ້າວັນທີ່ພິມລົງໃນຈົດໝາຍເຫດທາງລັດຖະການ.**

**ເຈົ້າແຂວງໆ ບໍ່ແກ້ວ**

**ດຣ ຄຳພັນ ເຜີຍຍະວົງ**

✪ ບ່ອນສົ່ງ: - ຄະນະປະຈຳພັກແຂວງ, ກຳມະການພັກແຂວງ ທ່ານ ລະ 1 ສະບັບ.

- ທຸກໆ ພະແນກການອ້ອມຂ້າງແຂວງ ພະແນກ ລະ 1 ສະບັບ.
- ທ່ານເຈົ້າເມືອງ 5 ເມືອງ, ເມືອງລະ 1 ສະບັບ
- ອະນຸກຳມະການແກ້ໄຂບັນຫາການປູກກ້ວຍຫອມ ທ່ານ ລະ 1 ສະບັບ.
- ຄະນະຫ້ອງວ່າການ ທ່ານ ລະ 1 ສະບັບ.
- ສຳເນົາຫ້ອງວ່າການ 2 ສະບັບ.
- ບໍລິສັດໄຟຟ້າສະຂາແຂວງບໍ່ແກ້ວ 1 ສະບັບ.
- ບັນດາບໍລິສັດປູກກ້ວຍຫອມ ບໍລິສັດລະ 1 ສະບັບ.
- ບັນດານາຍບ້ານ ແລະ ເລຂາໜ່ວຍພັກບ້ານ ທ່ານລະ 1 ສະບັບ
- ສອງກອງບັນຊາການ ປກສ-ປກຊ ພາກສ່ວນລະ 1 ສະບັບ (2ສະບັບ)
- ກຸ່ມສົ່ງເສີມ ແລະ ດຳເນີນທຸລະກິດການປູກກ້ວຍຫອມຢູ່ແຂວງບໍ່ແກ້ວ1 ສະບັບ.